# ອໍຣິກອນ
# ຢືນຢັດໃນການ ຕໍ່ຕ້ານ ຄວາມກຽດຊັງ

ຄວາມກຽດຊັງກັນກຳລັງເພີ່ມຂຶ້ນເລື້ອຍໆ. ເພື່ອຕໍ່ຕ້ານບັນຫາການກຽດຊັງກັນນີ້, ຣັຖອໍຣິກອນມີກົດໝາຍວ່າດ້ວຍອາຊະຍາກັມທີ່ເກີດຈາກຄວາມກຽດຊັງ ແລະເຫດການທີ່ເກີດຈາກອະຄະຕິ ຊຶ່ງ:

- **ສະໜັບສະໜຸນກຸ່ມຊົນຊັ້ນທີ່ໄດ້ຮັບການປົກປ້ອງ:** ເຊື້ອຊາດ, ສີຜິວ, ຊາດກຳເນີດ, ສາສະໜາ, ຄວາມພິການ, ຄວາມມັກຊອບທາງເພດ, ແລະຕົວຕົນຍິງຊາຍ.
- **ໃຫ້ການສະໜັບສະໜູນ ແລະແຫຼ່ງຊ່ວຍເຫຼືອຫຼາຍຂຶ້ນ** ສຳລັບຜູ້ຖືກເຄາະຮ້າຍ.
- **ຕິດຕາມລາຍງານທີ່ກ່ຽວກັບ** ອາຊະຍາກັມທີ່ເກີດຈາກຄວາມກຽດຊັງ ແລະເຫດການທີ່ເກີດຈາກອະຄະຕິ, ບໍ່ວ່າຈະມີຄົນລາຍງານຕໍ່ຕຳຫຼວດ ຫຼື ຕໍ່ກັບສາຍດ່ວນທີ່ເປັນຄວາມລັບດ້ານອະຄະຕິຂອງຣັຖອໍຣິກອນຫຼືບໍ່ກໍ່ຕາມ.

ບໍ່ມີໃຜຄວນເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກັມດ້ານຄວາມກຽດຊັງ ຫຼື ດ້ານອະຄະຕິ, ຫຼື ຕົກເປັນເປົ້າໝາຍຍ້ອນລັກສະນະຕົວຕົນທີ່ເຂົາເປັນຢູ່ນັ້ນ.

## ລາຍງານເຫດການ

ສາຍດ່ວນທີ່ເປັນຄວາມລັບແລະບໍລິການທົ່ວຣັຖອໍຣິກອນເພື່ອຮັບມືກັບບັນຫາການມີອະຄະຕິ (Bias Response Hotline) ຊ່ວຍເຮັດໃຫ້ງ່າຍໃນການລາຍງານບັນຫາທັງໝົດທີ່ກ່ຽວຂ້ອງກັບຄວາມກຽດຊັງແລະອະຄະຕິ, ບໍ່ວ່າມັນຈະເກີດຂຶ້ນກັບທ່ານ ຫຼື ໃຜຜູ້ໜຶ່ງກໍ່ຕາມ.

ໂທສາຍດ່ວນທີ່ບໍ່ແມ່ນເລື່ອງສຸກເສີນຂອງພວກເຮົາໄດ້ທີ່
**1-844-924-BIAS (2427)**
ເພື່ອປຶກສາກັບຜູ້ໃຫ້ການຊ່ວຍເຫຼືອດ້ານບາດແຜທາງໃຈ.
ວັນຈັນ - ວັນສຸກ ເວລາ 9 ໂມງເຊົ້າ-5 ໂມງແລງ
ຫຼັງເວລາເຮັດວຽກ, ຈະຕິດຕໍ່ກັບຄືນໂດຍທາງຂໍ້ຄວາມ
ພວກເຮົາຮັບສາຍໂທຣີເລທັງໝົດ
ບໍລິການແປພາສາຫຼາຍກວ່າ 240 ພາສາ

ຢ້ຽມຊົມເວັບໄຊ **StandAgainstHate.Oregon.gov** ເພື່ອລາຍງານໄດ້ທຸກເວລາ.

ໃນຣັຖອໍຣິກອນ, ພວກເຮົາສະໜັບສະໜູນຄວາມຫຼາກຫຼາຍຂອງຜູ້ຄົນ ແລະ ທ່ານເປັນສ່ວນໜຶ່ງຂອງພວກເຮົາ.

**STANDAGAINSTHATE.OREGON.GOV**

